


ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ຖະໜົນ ເລກ 7, ບ້ານ ໂພນສະຫວັນກາງ, ເມືອງ ແປກ, ແຂວງ ຊຽງຂວາງ | ໂທ/TEL: +856-61 260030-31
BANK OF THE LAO PDR NORTHERN AT XIENGKHOUANG PROVINCE, No.7 RD, PHONESAVANHKANG VILLAGE, PEAK DISTRICT, XIENGKHUANG PROVINCE | ແຟັກ/FAX: +856-61 260034

# ພິທີ
# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນ ເທື່ອທີ I ຂອງສະພາແຫ່ງຊາດ ຊຸດທີ IX




ໃນຕອນບ່າຍຂອງ ວັນທີ **13** ກັນຍາ **2021** ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ (ທຫລ.ຊຂ) ຮ່ວມກັບ ສະພາປະຊາຊົນ ແຂວງຊຽງຂວາງ ໄດ້ຈັດພິທີເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝວິສາມັນ ເທື່ອທີ **I** ຂອງສະພາແຫ່ງຊາດ ຊຸດທີ **IX** ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ແຕ່ປີ **2021-2023** ຂຶ້ນທີ່ຫ້ອງປະຊຸມໃຫຍ່ ຊັ້ນ **VI** ຂອງ ທຫລ.ຊຂ ໂດຍພາຍໃຕ້ການເປັນປະທານຂອງ ທ່ານ ບຸນໂຮມ ເທດທານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຊຽງຂວາງ, ພ້ອມດ້ວຍສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ **9** ແລະ ເປັນກຽດເຂົ້າຮ່ວມຮັບຟັງມີ ທ່ານ ວິສອນ ໄຊສົງຄາມ ເລຂາຄະນະພັກຮາກຖານທະນາຄານແຂວງຊຽງຂວາງ, ຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ, ມີຄະນະສາຂາ, ຄະນະພະແນກ, ບັນດາຜູ້ຕາງໜ້າຈາກທະນາຄານທຸລະກິດ ແລະ ສະຖາບັນການເງິນ ເຂົ້າຮ່ວມຢ່າງພ້ອມພຽງ ຫຼາຍກວ່າ **50** ທ່ານ.

ໃນພິທີ ທ່ານ ບຸນໂຮມ ເທດທານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຊຽງຂວາງ ໄດ້ຂຶ້ນສະເໜີຈຸດປະສົງຂອງກອງປະຊຸມ ໂດຍທ່ານໄດ້ໃຫ້ຮູ້ວ່າການຮັບຮອງເອົາວາລະແຫ່ງຊາດດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ແຕ່ປີ **2021-2023** ແມ່ນໄດ້ກຳນົດທັດສະນະຊີ້ນຳ, ຫຼັກການ, ຈຸດປະສົງ, ລະດັບຄາດໝາຍ, ທິດທາງ, ມາດຕະການ, ວຽກຈຸດສຸມ, ກົນໄກການຈັດຕັ້ງປະຕິບັດ, ການແກ້ໄຂບັນຫາຢາເສບຕິດ ແລະ ການແບ່ງຄວາມຮັບຜິດ

ຊອບໃຫ້ຂະແໜງການຕ່າງໆ ນັບແຕ່ສູນກາງ ແລະ ທ້ອງຖິ່ນ ຕະຫຼອດຮອດສະຖາບັນຄອບຄົວ ແລະ ທຸກຊັ້ນຄົນໃນສັງຄົມ.

ໃນກອງປະຊຸມຄັ້ງນີ້ຍັງໄດ້ຜ່ານມະຕິ ເລກທີ **03**/ສພຊ, ວັນທີ **10** ສິງຫາ **2021** ເຊິ່ງໄດ້ຮັບຮອງເອົາ **05** ວຽກງານຈຸດສຸມ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຄື: ສົ່ງເສີມການຜະລິດ ເພື່ອທົດແທນການນໍາເຂົ້າ ແລະ ເປັນສິນຄ້າສົ່ງອອກ, ສ້າງຄວາມເຂັ້ມແຂງທາງດ້ານການເກັບລາຍຮັບເຂົ້າງົບປະມານ, ຍົກສູງປະສິດທິຜົນການຄຸ້ມຄອງລາຍຈ່າຍງົບປະມານຂອງລັດ, ສ້າງສະຖຽລະພາບທາງດ້ານເງິນຕາ, ພ້ອມທັງຍົກສູງປະສິດທິພາບການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ດ້ວຍກົດໝາຍໃຫ້ມີຜົນສັກສິດ. ພ້ອມດຽວກັນນີ້, ຍັງໄດ້ຜ່ານມະຕິ ເລກທີ **04**/ສພຊ, ລົງວັນທີ **10** ສິງຫາ **2021** ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ມີລັກສະນະເດັດຂາດ, ໂປ່ງໃສ, ເປັນມືອາຊີບ ແລະ **06** ວຽກງານຈຸດສຸມ ຄື: ສ້າງຄວາມຮັບຮູ້ໃນທົ່ວສັງຄົມດ້ວຍການສຶກສາອົບຮົມ-ໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະ ຜົນຮ້າຍຂອງຢາເສບຕິດ, ສ້າງ-ປັບປຸງກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍທີ່ກ່ຽວຂ້ອງກັບຢາເສບຕິດ, ປັບປຸງກົງຈັກການຈັດຕັ້ງ ແລະ ຍົກລະດັບຄວາມສາມາດ ໃນການເຄື່ອນໄຫວເຮັດໜ້າທີ່ການເມືອງ, ຍົກສູງປະສິດທິພາບດ້ານການຄຸ້ມຄອງ, ຊີ້ນໍາໃນການຈັດຕັ້ງປະຕິບັດຮອບດ້ານ, ປັບປຸງຂີດຄວາມສາມາດການເຄື່ອນໄຫວເຮັດໜ້າທີ່ ຂອງລະບົບການເມືອງແຕ່ລະຂັ້ນ ແລະ ເພີ່ມທະວີວຽກງານການຮ່ວມມືສາກົນ.





ໃນຕອນທ້າຍທ່ານປະທານກອງປະຊຸມ ຍັງໄດ້ເນັ້ນໜັກແຕ່ລະຈຸດທີ່ສໍາຄັນ ກ່ຽວກັບຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ໂດຍມອບໃຫ້ອົງການປົກຄອງທ້ອງຖິ່ນ ກໍ່ຄືບັນດາຜູ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ເພີ່ມທະວີການຊີ້ນໍາ, ຍົກສູງຄວາມຮັບຜິດຊອບຂອງຕົນ, ຈັດຕັ້ງຜັນຂະຫຍາຍໃຫ້ເປັນມາດຕະການລະອຽດແຕ່ລະບັນຫາຕາມຂອບເຂດຄວາມຮັບຜິດຊອບຂອງຕົນ, ພ້ອມທັງເອົາໃຈໃສ່ຕິດຕາມ, ກວດກາ, ປະເມີນ ແລະ ຖອດຖອນບົດຮຽນຢ່າງເປັນປົກກະຕິ.

**ຂ່າວ: ສຸກສະຫວັນ ພົມມະວົງ**